# Community First Choice
# ທາງເລືອກເອົາການບໍລິການ

## ກ່ຽວກັບການບໍລິການຂອງ **CFC**

ການບໍລິການທີ່ຖືກບົ່ງຢູ່ທີ່ນີ້ໄດ້ຖືກສະເນີເອື້ອເຟື້ອໃຫ້ໂດຍຜ່ານໂຄງການ Community First Choice (CFC) ສຳລັບລູກຄ້າຜູ້ທີ່ມີເງື່ອນໄຂໄດ້ຮັບ

## ການບົວລະບັດສ່ວນຕົວ

ການບໍລິການເບິ່ງແຍງດູແລສ່ວນຕົວໃຫ້ຄວາມຊ່ວຍເຫລືອນຳພາລະກິດປະຈຳວັນເຊັ່ນວ່າການອາບນໍ້າ, ການນຸ່ງເຄື່ອງ, ຫລືການຄວບຄຸມເບິ່ງນຳຢາຂອງທ່ານ. ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບ, ທ່ານເລືອກເອົາຜູ້ໃຫ້ການບໍລິການທີ່ມີຄຸນນະວຸດທິ. ກົມ DSHS ຍັງຈະຈ່າຍເງິນໃຫ້ສຳລັບການກວດເບິ່ງເບື້ອງຫລັງ ແລະ ການຝຶກຝົນຜູ້ເບິ່ງແຍງດູແລພື້ນຖານສຳລັບຜູ້ໃຫ້ການເບິ່ງແຍງດູແລທີ່ມີຄຸນນະວຸດທິທຸກໆຄົນ.

ທ່ານສາມາດໄດ້ຮັບການບໍລິການເບິ່ງແຍງດູແລສ່ວນຕົວຢູ່ໃນ ເຮືອນຂອງທ່ານຫລືຢູ່ໃນຊຸມນຸມຊົນຂອງທ່ານ,ຖ້າຫາກວ່າທ່ານອາສັຍຢູ່ໃນ:

- ✓ ເຮືອນຂອງທ່ານ
- ✓ ເຮືອນຄອບຄົວຜູ້ໃຫຍ່
- ✓ ສະຖານທີ່ອາສັຍຢູ່ທີ່ມີຄົນຊ່ວຍເຫລືອ



## ການຝຶກຝົນການຄວບຄຸມເບິ່ງນຳຜູ້ໃຫ້ການເບິ່ງແຍງດູແລ

ຜູ້ໃຫ້ການບໍລິການຂອງທ່ານເປັນພາກສ່ວນສຳຄັນຂອງຄະນະທີມງານອູ້ມຊູຂອງທ່ານ. ທ່ານຈະຄວບຄຸມເບິ່ງນຳພາລະກິດປະຈຳວັນຂອງຜູ້ໃຫ້ການບໍລິການຂອງທ່ານ. ການຝຶກຝົນກໍມີໄວ້ໃຫ້ທີ່ຈະອະທິບາຍວ່າຈະເລືອກເອົາ, ຄວບຄຸມເບິ່ງນຳ, ແລະ ຍົກເລີກຜູ້ໃຫ້ການເບິ່ງແຍງດູແລໄດ້ແນວໃດ.

## ການເບິ່ງແຍງດູແລຜ່ອນເບົາ

ຜູ້ໃຫ້ການເບິ່ງແຍງດູແລຜ່ອນເບົາສາມາດຖືກໃຊ້ເພື່ອຈະໃຫ້ເວລາພັກຜ່ອນແກ່ຜູ້ໃຫ້ການເບິ່ງແຍງດູແລປົກກະຕິຂອງທ່ານ, ຫລືເຂົ້າມາເຮັດວຽກແທນຖ້າຫາກວ່າຜູ້ໃຫ້ການເບິ່ງແຍງດູແລຕາມປົກກະຕິຂອງທ່ານບໍ່ສະບາຍ ຫລື ບໍ່ວ່າງ. ທ່ານພິຈາຣະນາເບິ່ງວ່າຊົ່ວໂມງເຮັດວຽກທີ່ຖືກອະນຸມັດໃຫ້ຈັກຊົ່ວໂມງຈະຖືກໃຊ້ສຳລັບຜູ້ໃຫ້ການເບິ່ງແຍງດູແລຜ່ອນເບົາຂອງທ່ານທີ່ຈະເຮັດວຽກ.

## ການຝຶກຝົນການເອົາຄວາມຊຳນານມາໃຫ້ໄດ້

ການຝຶກຝົນຈະມີໄວ້ໃຫ້ສຳລັບທ່ານເພື່ອຈະກາຍເປັນອິດສະຣະຫລາຍກວ່າເກົ່ານຳພາລະກິດການບົວລະບັດຕົນເອງປະຈຳວັນຂອງທ່ານ. ທ່ານຈະໃຊ້ຊົ່ວໂມງເບິ່ງແຍງດູແລສ່ວນຕົວຂອງທ່ານບາງຊົ່ວໂມງຫລືຂອບເຂດປະຈຳປີຂອງງົບປະມານຂອງຣັດຂອງທ່ານເພື່ອຈະຊື້ເອົາ ການຝຶກຝົນການເອົາຄວາມຊຳນານມາໃຫ້ໄດ້.ອັນນີ້ອະນຸຍາດໃຫ້ຜູ້ເບິ່ງແຍງດູແລທີ່ຈະສອນທ່ານວ່າຈະເຮັດພາລະກິດຂອງການດຳຣົງຊີວິດປະຈຳວັນບາງຢ່າງໄດ້ແນວໃດ.ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງທ່ານສາມາດຊ່ວຍເຫລືອໄດ້ນຳພາລະກິດຕໍ່ລົງໄປນີ້:

- ການຄົວກິນຫລືການຈັດແຈງອາຫານ
- ການອອກຕະລາດຊື້ຂອງກິນ
- ພາລະກິດການມັຽນມັດເຮືອນ
- ການຊັກເຄື່ອງ
- ການອາບນໍ້າ (ຍົກເວັ້ນການເຄື່ອນຍ້າຍຕົວຕ່າງໆ)
- ການນຸ່ງເຄື່ອງ
- ການນຸ່ງເຄື່ອງ
- ການລ້າງມືແລະຫນ້າ
- ການລ້າງຕົວ,ການຫວີຜົມ,ການເຮັດຜົມ
- ການໃຊ້ເຄື່ອງສຳອາງ
- ການແຖຫນວດດ້ວຍມີດໂກນໄຟຟ້າ
- ການຖູແຂ້ວຫລືການບົວລະບັດແຂ້ວປອມ
- ການບົວລະບັດປະຈຳເດືອນ



## ເທັກໂນໂລຈີຊ່ວຍເຫລືອ

ເຄື່ອງເທັກໂນໂລຈີຊ່ວຍເຫລືອ,ລວມທັງອຸບປະກອນແລະສິ່ງອື່ນໆ,ສາມາດຊ່ວຍເຫລືອທ່ານໃຫ້ສຳເຣັດພາລະກິດໂດຍປາສຈາກຄວາມຊ່ວຍເຫລືອຂອງຄົນອື່ນໆ ຫລື ເພື່ອຈະກາຍເປັນອິດສະຣະພາບຫລາຍກວ່າໃນພາລະກິດປະຈຳວັນ.

ເພື່ອຈະໄດ້ເຄື່ອງເທັກໂນໂລຈີຊ່ວຍເຫລືອ, ທ່ານອາດຈະຕ້ອງການຄຳແນະນຳຈາກນັກວິຊາການວ່າສິ່ງຂອງແນວໃດຈະດີທີ່ສຸດສຳລັບທ່ານເພື່ອຈະເພີ້ມອິດສະຣະພາບຂອງທ່ານຂຶ້ນ.ນັກວິຊາການຈະແນະນຳບອກເທັກໂນໂລຈີທີ່ເຫມາະສົມແລະຈະຊ່ວຍທ່ານຮຽນຮູ້ວ່າຈະໃຊ້ມັນແນວໃດ.ເທັກໂນໂລຈີຊ່ວຍເຫລືອຈະຖືກຊື້ເອົາໂດຍການໃຊ້ຂອບເຂດປະຈຳປີຂອງງົບປະມານຂອງຣັດຂອງທ່ານ.



## ຣະບົບການຕອບຕໍ່ເຫດການສຸກເສີນສ່ວນຕົວ (PERS)

PERS ແມ່ນເຄື່ອງເອເລກໂຕຣນິກທີ່ທ່ານໃສ່ທີ່ຕິດຕໍ່ຜ່ານໂທຣະສັບຂອງທ່ານ, ຊຶ່ງຈະເຣັດໃຫ້ທ່ານໄດ້ຮັບຄວາມຊ່ວຍເຫລືອໃນເຫດການສຸກເສີນ. ເມື່ອເປີດໃຊ້ການໄດ້, ພະນັກງານຢູ່ສູນກາງຕອບຈະປະຕິບັດຕາມຄຳຊີ້ນຳທີ່ທ່ານໄດ້ເອົາໃຫ້ເພື່ອຈະໂທເອົາຄວາມຊ່ວຍເຫລືອ.

ນອກຈາກນັ້ນອີກ, ການບໍຣິການຕື່ມໃສ່ເພີ້ມເຕີມກໍມີໄວ້ໃຫ້ຖ້າຫາກວ່າທ່ານມີເງື່ອນໄຂທີ່ຈະໃຫ້ເຄື່ອງ PERS ຂອງທ່ານຕິດຕັ້ງໃຫ້ມີການຄົ້ນພົບການລົ້ມ, ການຊອກເບິ່ງ GPS, ຫລື ຣະບົບການຄວບຄຸມນຳຢາ.

ຜູ້ກຳກັບເອກສານຂອງທ່ານຈະຊ່ວຍເຫລືອທ່ານພິຈາຣະນາເບິ່ງວ່າທ່ານມີເງື່ອນໄຂໄດ້ຮັບຣະບົບເຫລົ່ານີ້ຫລືບໍ່.

ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບການບໍຣິການເຄື່ອງ PERS ທັມມະດາຈະຖືກລວມມານຳຊຸດຊ່ວຍເຫລືອ CFC. ການບໍຣິການຕື່ມໃສ່ເພີ້ມເຕີມຈະຖືກເກັບເອົາເງິນນຳ ຂອບເຂດປະຈຳປີຂອງງົບປະມານຂອງຣັດ.

## ການບໍຣິການປ່ຽນແປງໃສ່ຊຸມນຸມຊົນ

ການບໍຣິການປ່ຽນແປງໃສ່ຊຸມນຸມຊົນສາມາດຊ່ວຍເຫລືອທ່ານຍ້າຍຈາກໂຮງພະຍາບານເຂົ້າມາຢູ່ໃນຊຸມນຸມຊົນ. ທ່ານຈະເລືອກເອົາທີ່ຈະຍ້າຍໄປຢູ່ເຮືອນຂອງທ່ານເອງ, ຫລື ໄປຢູ່ເຮືອນຄອບຄົວຜູ້ໃຫຍ່ ຫລື ສະຖານທີ່ອາສັຍຢູ່ທີ່ມີຄົນຊ່ວຍເຫລືອ.



ເພື່ອຈະຮ້ອງຂໍເອົາການບໍຣິການ ຕິດຕໍ່ໄປຫາຜູ້ຈັດການເອກສານ DDA ຂອງທ່ານ, ຫລື ຖ້າຫາກວ່າທ່ານບໍ່ໄດ້ຮັບການບໍຣິການທີ່ຖືກຈ່າຍເງິນໃຫ້ຢູ່ໃນປັດຈຸບັນນີ້ ທ່ານຈະໂທຫາຫ້ອງການທ້ອງຖິ່ນຫລືແວ່ເຂົ້າຢ້ຽມ **www.dshs.wa.gov/dda/service-and-information-request.**

Washington State Department of Social & Health Services

*Transforming lives*